# ບັດໂອນເງິນເຂົ້າອອກດ້ວຍຣະບົບອີເລັກທຼໍນິກ (EBT) ຂອງຣັຖຄາລິຟໍເນັຽ




*ວິທີຮັບຟູດສແຕັມແລະເງິນຊ່ວຍເຫລືອຂອງທ່ານທີ່ທັງງ່າຍ, ປອດພັຍ ແລະສະດວກ.*

*ໃຫ້ມ້ຽນປຶ້ມຫົວນີ້ ໄວ້ໃນບ່ອນທີ່ປອດພັຍ.*

ມີຂໍ້ຂ້ອງໃຈບໍ່? ໃຫ້ໂທໄປຫາພແນກບໍຣິການລູກຄ້າ
ໂດຍບໍ່ມີການຄິດຄ່າ ວັນລະ 24 ຊົ່ວໂມງ, ອາທິດລະ 7 ວັນ

**1-877-328-9677**

ຣະບົບ **TTY: 1-800-735-2929** (ການຖ່າຍທອດທາງໂທຣະຄົມມະນາຄົມສຳຫລັບຜູ້ທີ່ການຟັງຫລືການເວົ້າບົກພ່ອງ)

www.ebtproject.ca.gov

*ຖ້າຫາກວ່າ, ຫລັງຈາກໄດ້ອ່ານປຶ້ມຫົວນີ້ແລ້ວ,*
*ທ່ານຢາກຮັບການຝຶກອົບຮົມເພີ່ມເຕີມອີກ,*
*ກະລຸນາຕິດຕໍ່ພະນັກງານປະຈຳຂອງທ່ານ.*

# ຄຳສັບທີ່ຄວນຮູ້

## ເຄື່ອງ POS (Point-of-Sale - ປະຈຳບ່ອນຂາຍ)



ເຄື່ອງ POS ຈະອ່ານບັດ EBT ຂອງທ່ານແລະອຳນວຍໃຫ້ທ່ານສາມາດຊື້ອາຫານແລະສິ່ງຕ່າງໆ ທີ່ບໍ່ແມ່ນອາຫານໄດ້ ໂດຍໃຊ້ຟູດສແຕັມຂອງທ່ານ.

## ເລກ PIN (Personal Identification Number - ເລກປະຈຳຕົວ)

ເລກ PIN ແມ່ນຣະຫັດລັບສີ່ຫລັກທີ່ທ່ານໃຊ້ພ້ອມກັບບັດ EBT ຂອງທ່ານ ເພື່ອໃຫ້ແນ່ນອນວ່າ ຜູ້ອື່ນຈະບໍ່ສາມາດໃຊ້ບັດຂອງທ່ານໄດ້. ເຄື່ອງ POS ຈະບໍ່ເຮັດການຖ້າທ່ານບໍ່ ໄດ້ຕີເລກ PIN ຂອງທ່ານເຂົ້າໄປ.

* * * *

ຂໍ້ສຳຄັນແມ່ນຈະຕ້ອງຮຽນຮູ້ແລະຈຳເລກ PIN ຂອງທ່ານໄວ້. ອັນນີ້ແມ່ນລັກສະນະຂອງເລກ PIN ຂອງທ່ານຕາມທີ່ປາກົດເທິງເຄື່ອງ POS.

## Quest® Mark (ເຄື່ອງໝາຍການຄ້າຈົດທະບຽນ Quest®)

ເຄື່ອງໝາຍ Quest® Mark ແມ່ນປ້າຍທີ່ປາກົດເທິງປະຕູຮ້ານ, ຊ່ອງກວດສິນຄ້າອອກ ແລະເຄື່ອງ POS ເພື່ອສະແດງໃຫ້ທ່ານຊາບວ່າ ຈະສາມາດໃຊ້ບັດ EBT ຂອງທ່ານໃນຮ້ານຫລືເຄື່ອງນັ້ນໄດ້. ມີພາບພິເສດບາງແນວປາກົດເທິງປ້າຍ Quest® ທີ່ສະແດງໃຫ້ທ່ານຊາບວ່າທ່ານຈະສາມາດໃຊ້ວິທີແນວໃດໄດ້. ໃຫ້ຊອກຫາປ້າຍ Quest® ແລະພາບດັ່ງກ່າວໃນຮ້ານນັ້ນກ່ອນທີ່ທ່ານຈະຊື້ຂອງ.

# ກ່ຽວກັບເລກ PIN ຂອງທ່ານ

- ສີ່ຕົວເລກລັບຂອງທ່ານນັ້ນ ເອີ້ນວ່າ ໝາຍເລກປະຈຳຕົວ (Personal Identification Number) ຫລືຮຽກສັ້ນໆ ວ່າເລກ PIN.
- ທຸກຄັ້ງທີ່ທ່ານຈະໃຊ້ບັດຂອງທ່ານ, ທ່ານຈະຕ້ອງໃຊ້ເລກ PIN ຂອງທ່ານ ບໍ່ຢ່າງນັ້ນບັດຂອງທ່ານຈະບໍ່ເຮັດການແລະທ່ານຈະບໍ່ສາມາດຮັບເງິນຂອງທ່ານໄດ້.
- ບໍ່ມີໃຜຮູ້ຈັກເລກ PIN ຂອງທ່ານ, ດັ່ງນັ້ນ ຂໍ້ສຳຄັນແມ່ນທ່ານຈະຕ້ອງຈຳເລກ PIN ຂອງທ່ານໄວ້.

* * * *

# ວິທີການຮັກສາເລກ PIN ຂອງທ່ານໃຫ້ມີຄວາມປອດພັຍ

- ຢ່າຂຽນເລກ PIN ຂອງທ່ານໄວ້ເທິງບັດຂອງທ່ານ, ປອກບັດ ຫລືສິ່ງອື່ນໃດທີ່ມັຽນໄວ້ກັບບັດຂອງທ່ານ.
- ຈົ່ງຮັກສາເລກ PIN ຂອງທ່ານເປັນຄວາມລັບ. ປ່າເປີດເຜີຍເລກ PIN ຂອງທ່ານໃຫ້ພະນັກງານປະຈຳຂອງທ່ານ, ສະມາຊິກໃນຄອບຄົວ, ພະນັກງານເກັບເງິນຂອງຮ້ານຕ່າງໆ ຫລືຜູ້ອື່ນໃດຊາບເປັນອັນຂາດ ຖ້າທ່ານບໍ່ຢາກໃຫ້ເຂົາເຈົ້າສາມາດເບີກງິນທັງໝົດຂອງທ່ານໄດ້.
- ຢ່າໃຊ້ເລກ PIN ຂອງທ່ານເປັນອັນຂາດ ຖ້າທ່ານຄິດວ່າມີໃຜຜູ້ໃດຜູ້ນຶ່ງກຳລັງມອງຕົວທ່ານ.
- ເມື່ອທ່ານໃຊ້ບັດ EBT ຂອງທ່ານ, ທ່ານຈະມີໂອກາດລອງສີ່ເທື່ອເພື່ອຕີເລກ PIN ຂອງທ່ານເຂົ້າໄປ. ໃນການລອງຄັ້ງທີ່ສີ່ນີ້ ຖ້າທ່ານຕີເລກ PIN ຜິດເຂົ້າໄປ, ທ່ານຈະບໍ່ສາມາດໃຊ້ບັດຂອງທ່ານໄດ້ອີກຈົນກວ່າຫລັງເວລາທ່ຽງຄືນຕໍ່ມາ. ຖ້າທ່ານຈຳເລກ PIN ຂອງທ່ານບໍ່ໄດ້, ໃຫ້ໂທໄປຫາພະແນກບໍຣິການລູກຄ້າ (ມີການຣະບຸເບີໂທເທິງດ້ານຫລັງຂອງບັດຂອງທ່ານ). ພະແນກບໍຣິການ ລູກຄ້າບໍ່ຮູ້ຈັກເລກ PIN ຂອງທ່ານ, ແຕ່ຈະຊ່ວຍທ່ານປ່ຽນເລກ PIN ຂອງທ່ານ.
- ຫາກຜູ້ໃດຮຽນຮູ້ເລກ PIN ຂອງທ່ານ ໂດຍບໍ່ໄດ້ຮັບຄວາມເຫັນຊອບຈາກທ່ານ, ໃຫ້ໂທໄປຫາພະແນກບໍຣິການລູກຄ້າ ທັນທີໂລດຫລືມາຫ້ອງການປະຊາສົງເຄາະປະຈຳທ້ອງຖິ່ນຂອງທ່ານເພື່ອປ່ຽນເລກ PIN ຂອງທ່ານ.
- ຫາກຜູ້ໃດເອົາບັດຂອງທ່ານໄປແລະຮູ້ຈັກເລກ PIN ຂອງທ່ານ, ເຂົາຈະສາມາດໃຊ້ບັດຂອງທ່ານໄດ້! ຖ້າຜູ້ອື່ນອີກຄົນນຶ່ງໄດ້ເບີກເງິນກ່ອນທ່ານ, ໃຫ້ໂທໄປຫາພະແນກບໍຣິການລູກຄ້າ, **ຈະບໍ່ມີການທົດແທນເງິນໃຫ້ທ່ານ.** ໃຫ້ໂທໄປຫາພະແນກບໍຣິການລູກຄ້າທັນທີເພື່ອບອກເລີກບັດຂອງທ່ານ.

# ຈົ່ງຮູ້ຍອດເງິນທີ່ເຫລືອໃນບັນຊີຂອງທ່ານ

ວິທີທີ່ດີທີ່ສຸດສຳຫລັບການຕິດຕາມຈຳນວນເງິນທີ່ທ່ານຍັງເຫລືອໃຊ້ໃນບັນຊີຟູດສແຕັມແລະ/ຫລືບັນຊີເງິນຂອງທ່ານ ແມ່ນການຮູ້ຍອດເງິນທີ່ເຫລືອໃນບັນຊີຂອງທ່ານ. ແລະວິທີທີ່ດີທີ່ສຸດສຳຫລັບຮູ້ຍອດເງິນທີ່ເຫລືອໃນບັນຊີຂອງທ່ານແມ່ນ **ການມ້ຽນໃບຮັບສະບັບສຸດທ້າຍຂອງທ່ານໄວ້**. ຍອດເງິນທີ່ເຫລືອຈະບໍ່ປາກົດໃນບ່ອນດຽວກັນໃນໃບຮັບທຸກສະບັບ.

STORE NAME
100 ANY STREET ADDRESS
CITY, STATE ZIP

TERM ID 258407
MERCH TERM ID 258407ABC
SEQ# 289
CLERK 107
06/02/99 10:25
CASE # C1234567890

| | TRAN AMT | END BAL |
|---|---|---|
| FS | $ 45.20 | $ 229.80 |

FS PURCH $ 45.20 APPROVED

ຖ້າຫາກທ່ານເຮັດໃບຮັບສະບັບສຸດທ້າຍຂອງທ່ານຫາຍ, ແລະຕ້ອງການຮູ້ເງິນສ່ວນເຫລືອຂອງທ່ານ :

- ໃຫ້ໂທໄປຫາພແນກບໍຣິການລູກຄ້າ ຕາມເບີທີ່ປາກົດເທິງດ້ານຫລັງຂອງບັດຂອງທ່ານ, ຫລື
- ກວດເບິ່ງຍອດເງິນທີ່ເຫລືອໃນບັນຊີຟູດສແຕັມຂອງທ່ານຕາມເຄື່ອງ POS, ຫລື

ທ່ານຄວນຮູ້ຍອດເງິນຍີ່ເຫລືອຢູ່ໃນບັນຊີຂອງທ່ານສເມີ ກ່ອນທີ່ທ່ານຈະໃຊ້ບັດຂອງທ່ານ!

# ວິທີໃຊ້ບັດ EBT ຂອງທ່ານເພື່ອຊື້ອາຫານ

ຂັ້ນຕອນທີ່ທ່ານຈະຕ້ອງປະຕິບັດຕາມອາດຈະແຕກຕ່າງກັນອອກໄປສຳຫລັບເຄື່ອງ POS ແຕ່ລະຊະນິດທີ່ມີໄວ້ໃຫ້ທ່ານໃຊ້. ຢ່າລັງເລໃຈບໍ່ກ້າຂໍຄວາມ ຊ່ວຍເຫລືອຈາກພະນັກງານຂອງຮ້ານ.

ໃຫ້ຮູ້ຈັກຈຳນວນເງິນທີ່ເຫລືອໃນບັນຊີຂອງທ່ານ! ໃຫ້ກວດເບິ່ງໃບຮັບສະບັບສຸດທ້າຍຂອງທ່ານຫລືໂທໄປຫາພະແນກບໍຣິການລູກຄ້າກ່ອນທີ່ທ່ານຈະອອກໄປຊື້ຂອງ.

ຂັ້ນຕອນທີ່ 1 ໃຫ້ເລືອກສິນຄ້າທີ່ທ່ານຕ້ອງການຊື້ ແລ້ວຍ່າງໄປຍັງຊ່ອງກວດສິນຄ້າອອກ. ຂຶ້ນຢູ່ກັບຮ້ານ, ທ່ານອາດຈຳເປັນຕ້ອງແຍກສິນຄ້າທີ່ສາມາດຊື້ກັບຟູດສແຕັມໄດ້ອອກຈາກສິນຄ້າອື່ນໆ.

ຂັ້ນຕອນທີ່ 2 ຮູດບັດຂອງທ່ານຜ່ານເຄື່ອງປາຍທາງປະຈຳບ່ອນຂາຍ (POS) ຫລືມອບບັດ EBT ຂອງທ່ານໃຫ້ແກ່ພະນັກງານ.

ຂັ້ນຕອນທີ່ 3 ໃຫ້ກົດໝາຍເລກປະຈຳຕົວ (Personal Identification Number ຫລື PIN) ສີ່ຫລັກຂອງທ່ານເທິງແປ້ນຂອງເຄື່ອງ. ຈໍພາບຈະສະແດງ **** ແທນຕົວເລກທີ່ທ່ານໄດ້ຕີເຂົ້າໄປ.

ຂັ້ນຕອນທີ່ 4 ໃຫ້ກົດ ENTER.

ຂັ້ນຕອນທີ່ 5 ພະນັກງານຂອງຮ້ານຈະຕີຈຳນວນຟູດສແຕັມ. ຖ້າຈຳນວນນັ້ນຖືກຕ້ອງ, ໃຫກົດ "OK" ຫລື "YES".

ຂັ້ນຕອນທີ່ 6 ທ່ານຈະໄດ້ຮັບສຳເນົາໃບຮັບສະບັບພິມທີ່ສະແດງ:
- ຊື່ແລະບ່ອນທີ່ຕັ້ງຂອງຮ້ານ
- ຈຳນວນເງິນທີ່ທ່ານຊື້ຂອງ
- ຍອດບັນຊີຟູດສແຕັມໃໝ່ຂອງທ່ານ

ຂັ້ນຕອນທີ່ 7 ໃຫ້ມ້ຽນໃບຮັບຂອງທ່ານໄວ້ ເພື່ອໃຫ້ຮູ້ຍອດບັນຊີໃໝ່ຂອງທ່ານເມື່ອທ່ານໄປຊື້ຂອງຄັ້ງຕໍ່ໄປ.

ຢ່າລືມ ຈະບໍ່ມີການຄິດຄ່າທັມນຽມໃຫ້ທ່ານຈ່າຍເລີຍ ເນື່ອງຈາກທ່ານໄດ້ໃຊ້ຟູດສແຕັມຂອງທ່ານ ແລະ ທ່ານບໍ່ສາມາດເບີກເງິນຫລືໄດ້ຮັບເສັດເງິນຄືນຈາກບັນຊີຟູດສແຕັມຂອງທ່ານໄດ້.
ເມື່ອທ່ານໃຊ້ບັດ EBT ຂອງທ່ານ, ທາງຄາວເຕີ້ຈະບໍ່ຮູ້ວ່າທ່ານໄດ້ຊື້ຫຍັງ, ພຽງແຕ່ວ່າທ່ານໄດ້ໃຊ້ບັດຢູ່ໃສແລະທ່ານໄດ້ຈ່າຍເງິນຫລາຍປານໃດເທົ່ານັ້ນ.

# ຈະເຮັດຢ່າງໃດແດ່ ໃນກໍຣະນີທີ່ເຄື່ອງ POS ໃຊ້ການບໍ່ໄດ້



CITICORP EFS OFFLINE FOOD STAMP VOUCHER No.

**Important! Vouchers must be entered or cleared on the POS device (or mailed within 10 days if non-electronic) within 15 days of the sale or funds will not be reimbursed.**

Card Number:

Print Cardholder Name

Cardholder Signature Date

In signing this voucher, I believe that food stamp funds are available for the full amount of this transaction.

This voucher will be rejected if information in this section has been altered.

Trans. Date/Time

Approval Number

Store FNS Number

Purchase Amount

☐ Purchase ☐ Refund

Merchant ID

Print Store Name

Store Address

Store City/State/Zip Code

Store Supervisor/Clerk Signature

Food Stamp regulations prohibit representation of this voucher by merchant if voice authorization was denied.

Date Entered __/__/ Operator's Initials

White – Client/Customer Copy; Yellow – Merchant Copy; Pink – Non-Electronic Retailer Mail-In Copy to Retail Support Operations

NOTE: Electronic Retailers to Retain the Pink copy

Citicorp EFS Retail Support Operations • P.O. Box 30220 • Tampa, FL 33630-3220

01-033 03-12/01 CONVERSION

ຖ້າຫາກວ່າທ່ານຕ້ອງການຊື້ສິນຄ້າທີ່ສາມາດຊື້ກັບຟູດສແຕ້ມໄດ້ ແລະເຄື່ອງ POS ໃຊ້ການບໍ່ໄດ້ ຫລືຮ້ານນັ້ນບໍ່ມີເຄື່ອງ, ຜູ້ຮັບເງິນ ຈະຕື່ມເຈັ້ຽ ຟອມສະບັບນຶ່ທີ່ຮຽກຊື່ວ່າ ໃບຮັບຮອງການເບີກເງິນຊື້ ອາຫານ (Food Stamp Voucher). ຜູ້ຄ້າບາງ ລາຍ, ເຊັ່ນ ຜູ້ຂາຍເຄື່ອນທີ່, ບໍ່ມີເຄື່ອງ POS. ຜູ້ຮັບເງິນກໍຈະ ຂຽນໝາຍເລກ ບັດ EBT ຂອງທ່ານ ແລະຈຳນວນເງິນທີ່ທ່ານ ຈ່າຍລົງໃນເຈັ້ຽຟອມ ນັ້ນ. ຢ່າເປີດເຜີຍເລກ PIN ຂອງທ່ານ ໃຫ້ຜູ້ຮັບເງິນຊາບ. ຜູ້ຮັບເງິນໂທມາຫາເພື່ອໃຫ້ຮູ້ວ່າທ່ານມີເງິນເຫລືອຢູ່ໃນບັນຊີຂອງທ່ານພໍ ສາມາດຊື້ອາຫານນັ້ນໄດ້ຫລືບໍ່. ຖ້າບັນຊີຂອງທ່ານມີເງິນຫລືອຢູ່ຢ່າງ ພຽງພໍ, ເພິ່ນຈະໃຫ້ທ່ານລົງຊື່ໃນໃນໃບຮັບຮອງນັ້ນແລະທ່ານຈະໄດ້ ຮັບສຳເນົາເລກະສານດັ່ງກ່າວ ສະບັບ ນຶ່ງ. ຂໍ້ສຳຄັນແມ່ນທ່ານຈະ ຕ້ອງມ້ຽນສຳເນົາສະບັບນີ້ໄວ້ເພື່ອໃຫ້ທ່ານສາມາດຫັກລົບຈຳນວນເງິນ ທີ່ທ່ານໄດ້ຈ່າຍຈາກຍອດ ເງິນທີ່ປາກົດໃນໃບຮັບ EBT ສະບັບສຸດທ້າຍ ຂອງທ່ານ. ດັ່ງນັ້ນ ທ່ານຈະຮູ້ໄດ້ວ່າຍອດປັດຈຸບັນໃນບັນຊີຂອງທ່ານ ແມ່ນເງິນຈຳນວນ ເທົ່າໃດແນ່.

# ວິທີຮັກສາບັດ EBT ຂອງທ່ານ

ຢ່າມ້ຽນບັດແລະເລກ PIN ຂອງທ່ານໄວ້ໃນບ່ອນດຽວກັນ.
ຢ່າງໍຫລືພັບບັດຂອງທ່ານ.
ຢ່າຂູດຫລືຂຽນໃສ່ເສັ້ນສີດຳທີ່ຢູ່ດ້ານຫລັງຂອງບັດຂອງທ່ານ.
ຢ່າໃຫ້ບັດຂອງທ່ານປຽກນ້ຳ.
ຢ່າເອົາບັດຂອງທ່ານໄວ້ໃກ້ແມ່ເຫລັກ, ທີວີ, ເຄື່ອງຫລິ້ນດີວີດີ, ເຄື່ອງຫລິ້ນຊີດີ ຫລືວີຊີອາ.
ຢ່າປະປ່ອຍບັດຂອງທ່ານໄວ້ໃຫ້ຕາກແດດ, ເຊັ່ນໜ້າຣົຖ, ເພາະວ່າຈະເຮັດໃຫ້ບັດງໍແລະໃຊ້ການບໍ່ໄດ້.
ຢ່າມ້ຽນບັດຂອງທ່ານໄວ້ຕາມບ່ອນທີ່ເຫັນໄດ້ງ່າຍ – ຫລັງຈາກໄດ້ໃຊ້ແລ້ວ ໃຫ້ມ້ຽນບັດຂອງທ່ານໄວ້ໃນບ່ອນທີ່ປອດພັຍທຸກໆ ຄັ້ງ.
ຢ່າຖິ້ມບັດຂອງທ່ານ – ທ່ານຈະຕ້ອງໃຊ້ບັດອັນດຽວກັນນີ້ທຸກໆເດືອນນານເທົ່າທີ່ທ່ານໄດ້ຮັບເງິນຊ່ວຍເຫລືອ. ນອກຈາກນີ້, ທ່ານຍັງສາມາດໃຊ້ບັດ EBT ຂອງທ່ານໄດ້ທຸກໆ ບ່ອນທີ່ທ່ານພົບເຄື່ອງໝາຍ Quest ທົ່ວຣັຖຄາລິຟໍເນັຽແລະທົ່ວປະເທດ.

ຖ້າບັດຂອງທ່ານຫາຍຫລືຖືກລັກໄປ, ໃຫ້ໂທໄປຫາພະແນກບໍຣິການລູກຄ້າທັນທີໂລດ. ເພິ່ນຈະສັ່ງປິດບັດຂອງທ່ານຕາຍ ແລ້ວບອກວິທີທີ່ທ່ານຈະສາມາດຮັບບັດໃໝ່ໄດ້. ຂໍ້ສຳຄັນແມ່ນທ່ານຈະຕ້ອງໂທໄປຫາພະແນກບໍຣິການລູກຄ້າຢ່າງໄວທີ່ສຸດເທົ່າທີ່ຈະໄວ້ໄດ້! ການຮັບບັດໃໝ່ແທນອາດຈະ ໃຊ້ເວລານານເຖິງສາມວັນຣາຊການໄດ້.

# ກໍຣະນີທີ່ສົມຄວນໂທໄປຫາ ພແນກບໍຣິການລູກຄ້າ ໂດຍຜ່ານເລກໂທທີ່ບໍ່ມີການຄິດຄ່າບໍຣິການ

# 1-877-328-9677

ການໂທປະເພດນີ້ບໍ່ມີການຄິດຄ່າບໍຣິການ.
ພແນກບໍຣິການລູກຄ້າເປີດເຮັດການຕລອດ 24 ຊົ່ວໂມງ, ອາທິດລະ 7 ວັນ ເພື່ອຕອບຄໍາຖາມຕ່າງໆ ທີ່ທ່ານອາດຈະມີຢູ່ກ່ຽວກັບບັດ EBT ຂອງ ທ່ານ. ພູ້ຮັບສາຍແມ່ນໜ່ວຍຕອກຄໍາຖາມໂດຍອັຕໂນມັດ (Automated Response Unit) ເຊິ່ງສາມາດຕອບ ຄໍາຖາມຂອງທ່ານໄດ້ເກືອບທຸກຂໍ້ ໂດຍບໍ່ຈໍາເປັນຕ້ອງເວົ້ານໍາເຈົ້າພະນັກງານຜູ້ໃດຜູ້ນຶ່ງຂອງພແນກ ບໍຣິການລູກຄ້າ. ຈະສາມາດຕອບຄໍາຖາມເປັນພາສາອັງກິດ, ສເປນ, ອາເມນຽນຕະວັນອອກ, ຂເມນ, ຈີນ, ຟາຣ໌ຊີ, ມົ້ງ, ລາວ, ຣັດເຊັຽ ແລະວຽດນາມໄດ້.

ໃຫ້ໂທມາຫາໃນກໍຣະນີທີ່ :

- ບັດຂອງທ່ານຫາຍ ຫລືຖືກລັກໄປ
- ບັດຂອງທ່ານຊໍາຣຸດແລ້ວ
- ທ່ານຢາກປ່ຽນເລກ PIN ຂອງທ່ານໃໝ່ ຍ້ອນວ່າທ່ານໄດ້ລືມ, ເສັຽ ຫລືຜູ້ອື່ນຮູ້ຈັກເລກ PIN ຂອງທ່ານ. ຫ້ອງການປະຊາສົງເຄາະປະຈໍາທ້ອງຖິ່ນຂອງທ່ານຍັງອາດສາມາດຊ່ວຍທ່ານປ່ຽນເລກ PIN ຂອງທ່ານໄດ້.
- ທ່ານຢາກຮູ້ວ່າທ່ານມີເງິນເຫລືອຫລາຍປານໃດໃນບັນຊີຂອງທ່ານ.
- ໄດ້ມີການຄິດຄ່າສິນຄ້າປະເພດອາຫານໃຫ້ທ່ານຈ່າຍ, ແຕ່ວ່າທ່ານບໍ່ໄດ້ຮັບສິນຄ້ານັ້ນ ຫລືວ່າ ໄດ້ມີການຄິດຄ່າທີ່ສູງກວ່າຂອງສິນຄ້າທີ່ທ່ານໄດ້ຊື້.
- ທ່ານມີຂໍ້ຂ້ອງໃຈຫລືບັນຫາອື່ນໃດ.

## ວັນລະ 24 ຊົ່ວໂມງ, ອາທິດລະ 7 ວັນ

## 1-877-328-9677

## TTY: 1-800-735-2929

# ວັນທີ່ກຳໜົດໃຫ້ທ່ານໄດ້ຮັບເງິນຂອງທ່ານ

ມີການກຳໜົດວັນຂອງເດືອນທີ່ທ່ານໄດ້ຮັບຟູດສແຕັມຂອງທ່ານຕາມເລກທ້າຍໃນ ໝາຍເລກກໍຣະນີຂອງທ່ານ.

## ຟູສແຕັມ

| ຖ້າຕົວເລກສຸດທ້າຍຂອງທ່ານແມ່ນ : | ຟູດສແຕັມຂອງທ່ານຈະມີໃຫ້ໃນວັນ: |
|---|---|
| 1 | ທີ່ 1 ຂອງເດືອນ |
| 2 | ທີ່ 2 ຂອງເດືອນ |
| 3 | ທີ່ 3 ຂອງເດືອນ |
| 4 | ທີ່ 4 ຂອງເດືອນ |
| 5 | ທີ່ 5 ຂອງເດືອນ |
| 6 | ທີ່ 6 ຂອງເດືອນ |
| 7 | ທີ່ 7 ຂອງເດືອນ |
| 8 | ທີ່ 8 ຂອງເດືອນ |
| 9 | ທີ່ 9 ຂອງເດືອນ |
| 0 | ທີ່ 10 ຂອງເດືອນ |

- ຈະສາມາດຮັບເງິນທຸກວັນໄດ້ ຮວມທັງວັນເສົາ–ວັນອາທິດແລະວັນຢຸດຣາຊການ
- ຈະນຳຍອດເງິນທີ່ເຫລືອໃນບັນຊີຂອງທ່ານຕອນປາຍເດືອນເຂົ້າໄປຮ່ວມກັບຈຳນວນຂອງເງິນຂອງເດືອນຕໍ່ໄປ

ໃຫ້ຕືວັນທີ່ທີ່ຟູດສແຕັມຂອງທ່ານຈະຖືກໂອນເຂົ້າໄປໃນບັນຊີຂອງທ່ານ

________________________________________

(ວັນທີ່ 1 ຫາວັນທີ່ 10 ຂອງເດືອນ)

# ສິ່ງທີ່ຄວນຈຳໄວ້ໃຫ້ດີ

## ກ່ຽວກັບບັດ/ເລກ **PIN** ຂອງທ່ານ

- ຖ້າຫາກວ່າບັດຂອງທ່ານຫາຍຫລືຖືກລັກ, ໃຫ້ໂທໄປຫາພະແນກບໍລິການລູກຄ້າທັນທີໂລດ.
- ຈົ່ງຮັກສາບັດຂອງທ່ານໃຫ້ດີ.
- ຈົ່ງມ້ຽນບັດຂອງທ່ານໄວ້ໃນບ່ອນທີ່ປອດພັຍ.
- ຢ່າໃຫ້ຄົນອື່ນໃຊ້ບັດຂອງທ່ານໂດຍບໍ່ໄດ້ຮັບອະນຸຍາດຈາກທ່ານ.
- ທ່ານຈະຕ້ອງໃຊ້ເລກ PIN ຂອງທ່ານທຸກໆ ເທື່ອທີ່ທ່ານໃຊ້ບັດຂອງທ່ານ ຍົກເວັ້ນໃນກໍຣະນີທີ່ມີການໃຊ້ໃບຮັບຮອງການເບີກເງິນຊື້ອາຫານ.
- ຢ່າປະປ່ອຍບັດຂອງທ່ານໄວ້ຢູ່ ເຄື່ອງ POS.
- ໃຫ້ໂທໄປຫາຫ້ອງການປະຊາສົງເຄາະປະຈຳທ້ອງຖິ່ນຂອງທ່ານໃນກໍຣະນີທີ່ທ່ານໄດ້ຍ້າຍບ່ອນຢູ່. ທ່ານຈະສາມາດໃຊ້ບັດຂອງທ່ານໃນຄາວຕີ້ໃໝ່ຂອງທ່ານໄດ້.

## ກ່ຽວກັບຍອດເງິນທີ່ເຫລືອໃນບັນຊີຂອງທ່ານ

- ໃຫ້ມ້ຽນໃບຮັບຂອງທ່ານໄວ້ ເພື່ອຈະໄດ້ຮູ້ເງິນສ່ວນເຫລືອໃນບັນຊີຂອງທ່ານ.
- ໃຫ້ກວດເບິ່ງຍອດບັນຊີຂອງທ່ານກ່ອນທີ່ທ່ານຈະອອກໄປຊື້ຂອງ.

## ກ່ຽວກັບເຄື່ອງ **POS**

- ໃຫ້ໃຊ້ເຄື່ອງ POS ເພື່ອຊື້ອາຫານໂດຍໃຊ້ບັນຊີຟູດສແຕ້ມຂອງທ່ານ.
- ຈະບໍ່ມີການຄິດຄ່າທັມນຽມໃດໆ ເປັນອັນຂາດ ເນື່ອງຈາກທ່ານໄດ້ໃຊ້ຟູສແຕ້ມຂອງທ່ານ.

# ພແນກບໍຣິການລູກຄ້າ

## ວັນລະ 24 ຊົ່ວໂມງ, ອາທິດລະ 7 ວັນ

## **1-877-328-9677**

## TTY: 1-800-735-2929




ຕາມກົດໝາຍຂອງຣັຖບານກາງແລະນະໂຍບາຍຂອງກະຊວງກະເສດແຫ່ງສະຫະຣັຖ, ມີການຫ້າມສະຖາບັນນີ້ບໍ່ໃຫ້ມີ ການເລືອກປະຕິບັດໂດຍອີງໃສ່ເຊື້ອຊາດ, ຜິວພັນ, ສັນຊາດເດີມ, ເພດ, ອາຍຸ, ສາສນາ, ລັດທິທາງການເມືອງ ຫລືສະພາບພິການ. ໃນການຍື່ນຄໍາຮ້ອງທຸກກ່ຽວກັບການເລືອກປະຕິບັດ, ໃຫ້ຂຽນຈົດໝາຍໄປຍັງ USDA, Director, Office of Civil Rights, Room 326-W, Whitten Building, 1400 Independence Avenue SW, Washington, DC 20250-9410 ຫລືໂທຫາ (202) 720-5964 (ຣະບົບສຽງແລະ TDD). USDA ແມ່ນຜູ້ໃຫ້ບໍຣິການແລະຜູ້ວ່າຈ້າງທີ່ໃຫ້ໂອກາດແກ່ທຸກຄົນຢ່າງ ສເມີພາກ.

**STATE OF CALIFORNIA**
*Arnold Schwarzenegger, Governor*
**HEALTH AND HUMAN SERVICES AGENCY**
*Kimberly Belshé, Secretary*
**DEPARTMENT OF SOCIAL SERVICES**

PUB 387 (Lao) (2/06)